ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ

ເລກທີ 519 /ວທ

ນະຄອນຫຼວງວຽງຈັນ, ວັນທີ 04 ສິງຫາ 2026

# ຂໍ້ຕົກລົງ
## ວ່າດ້ວຍການຮັບຮອງເອົາມາດຕະຖານສະຖານທີ່ພັກແຮມ ຂອງ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບປັບປຸງ ເລກທີ 63/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ສະບັບ ເລກທີ 700/ນຍ, ລົງວັນທີ 07 ພະຈິກ 2025;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະເມີນມາດຕະຖານການຈັດລະດັບ ສະຖານທີ່ພັກແຮມທີ່ພັກແຮມ ຂັ້ນສູນກາງ ຂອງ ສປປ ລາວ ເລກທີ 506/ວທ, ລົງວັນທີ 30 ກໍລະກົດ 2026.

## ລັດຖະມົນຕີ ຕົກລົງ:

ມາດຕາ 1 ເຫັນດີ ຮັບຮອງເອົາ ແລະ ປະກາດໃຊ້ມາດຕະຖານສະຖານທີ່ພັກແຮມ ຂອງ ສປປ ລາວ;

ມາດຕາ 2 ມອບໃຫ້ກົມຄຸ້ມຄອງການທ່ອງທ່ຽວ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າແຫຼ່ງງົບປະມານ ກອງທຶນການທ່ອງທ່ຽວ ແລະ ອື່ນໆ ເພື່ອຈັດຕັ້ງປະຕິບັດມາດຕະຖານສະຖານທີ່ພັກແຮມ ຂອງ ສປປ ລາວ ໃຫ້ມີປະສິດທິພາບ;

ມາດຕາ 3 ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ;

ມາດຕາ 4 ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບຕັ້ງແຕ່ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ
ລັດຖະມົນຕີ

ສວນສະຫວັນ ວິຍະເກດ